ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----====໙໙໙໑໑໑====----

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ເລກທີ: 1021---/ຄພນ

ນະຄອນຫຼວງວຽງຈັນ, ວັນທີ: 29 Jul 2011

ເຖິງ: ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ການເກັບກຳສະຖິຕິຕະຫຼາດ ແລະ ຮ້ານຄ້າພາຍໃນແຂວງ, ນະຄອນຫຼວງ

- ອີງຕາມແຈ້ງການກ່ຽວກັບການລາຍງານ ສະພາບລາຄາສິນຄ້າປະຈຳອາທິດ ແລະ ປະຈຳເດືອນ. ສະບັບເລກທີ 1029/ອຄ.ຄພນ, ລົງວັນທີ 02 ມິຖຸນາ 2011;

ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອເກັບກຳ ຂໍ້ມູນສະຖິຕິຕະຫຼາດຂາຍຍົກ, ຕະຫຼາດຂາຍຍ່ອຍ, ຕະຫຼາດນັດ, ຮ້ານຄ້າຂາຍຍົກ ແລະ ຮ້ານຄ້າຂາຍຍ່ອຍ ປະຈຳປີ ພາຍໃນແຂວງຂອງຕົນ ໂດຍນຳໃຊ້ຕາຕະລາງ 7 ແລະ ຕາຕະລາງ 7.1 ຊຶ່ງແມ່ນຕາຕະລາງເພີ່ມ ເຕີມທີ່ໄດ້ກຳນົດໄວ້ໃນວັກສຸດທ້າຍຂໍ້ 1 ຂອງແຈ້ງການສະບັບເລກທີ 1029/ອຄ.ຄພນ, ລົງວັນທີ 02 ມິຖຸນາ 2011 (ໄດ້ຄັດຕິດເອກະສານມາພ້ອມນີ້):

1. ຕາຕະລາງ 7: ແມ່ນຕາຕະລາງຈຳນວນຕະຫຼາດ ແລະ ຮ້ານຄ້າຂາຍຍົກ-ຂາຍຍ່ອຍ ຂອງແຂວງ ຊຶ່ງທາງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ມີໜ້າທີ່ສັງລວມຈາກການລາຍງານຂອງ ບັນດາເມືອງພາຍໃນແຂວງຂອງຕົນ ເພື່ອລາຍງານໃຫ້ກົມການຄ້າພາຍໃນ ກ່ອນວັນທີ 15 ເດືອນທັນວາ ຂອງທຸກໆປີ.

2. ຕາຕະລາງ 7.1: ແມ່ນຕາຕະລາງຈຳນວນຕະຫຼາດ ແລະ ຮ້ານຄ້າຂາຍຍົກ-ຂາຍຍ່ອຍ ຂອງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ທີ່ໄດ້ມາຈາກການເກັບກຳຈຳນວນຕະຫຼາດຂາຍຍົກ, ຕະຫຼາດຂາຍຍ່ອຍ, ຕະຫຼາດນັດ, ຮ້ານຂາຍຍົກ ແລະ ຮ້ານຂາຍຍ່ອຍຕ່າງໆ ທີ່ມີທະບຽນວິສາຫະກິດ ແລະ ບໍ່ມີທະບຽນວິສາຫະກິດ ຊຶ່ງມີທີ່ຕັ້ງຢູ່ໃນເມືອງຂອງຕົນ ເພື່ອລາຍງານໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ກ່ອນວັນທີ 05 ເດືອນທັນວາ ຂອງທຸກໆປີ.

3. ໃນຈຳນວນຫົວໜ່ວຍທຸລະກິດທັງໝົດ (ຮ້ານຄ້າຂາຍຍົກ ແລະ ຮ້ານຄ້າຂາຍຍ່ອຍ) ຮ້ານທີ່ມີທະບຽນວິສາຫະກິດກວມເອົາຈັກ % ແລະ ຮ້ານທີ່ບໍ່ມີທະບຽນວິສາຫະກິດກວມເອົາຈັກ % ຂອງຮ້ານຄ້າທັງໝົດພາຍໃນແຂວງ ແລະ ເມືອງຂອງຕົນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າກົມການຄ້າພາຍໃນ

ດຣ. ສົມພອງ ພຽນພິບິດ

ຜູ້ປະສານງານ: ທ. ພົງສັກດີ ສີວິໄລ. ໂທ 020 99829555, 021 990109 ແຟັກ 021 412001

ພະແນກວິໄຈ ພະຍາກອນຕະຫຼາດສິນຄ້າ-ລາຄາ